NANTHAVONG et al. (2023). Souphanouvong University Journal of Multidisciplinary Research and Development. ISSN 2521-0653. Volume 9. Issue 3. Jul - Sep. 2023. Page 45 – 54

# ການພັດທະນາທັກສະການອ່ານ ແລະ ການຂຽນ ອັກສອນທຳ ຂອງນັກສຶກສາຄູພາສາລາວ - ວັນນະຄະດີ ປີ 2 ຄະນະສຶກສາສາດ ໂດຍນຳໃຊ້ກິດຈະກຳການຮຽນຮູ້ແບບ CIRC

**ນາງ ແຫວນທອງ ນັນທະວົງ*[1], ວິຊຽນ ທອງທະວີ[2], ພອນສະຫວັນ ກ່ຳກ້ຽງຍິມ[3], ໄພວອນ ນັນທະວົງ[4]**

*ພາກວິຊາຄູພາສາລາວ - ວັນນະຄະດີ, ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ*

***ຕິດຕໍ່ພົວພັນ:** *ແຫວນທອງ ນັນທະວົງ, ສາຂາ ພາສາ - ວັດທະນະທຳລາວ, ພາກວິຊາພາສາ - ວັດທະນະທຳລາວ, ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດ, ເບີໂທ 020 58565757, ອີເມວ vandthong2012@gmail.com*

*[2,3,4] ພາກວິຊາຄູພາສາລາວ - ວັນນະຄະດີ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ*

**ຂໍ້ມູນບົດຄວາມ:**
*ການສົ່ງບົດ: 21 ພະຈິກ 2022*
*ການປັບປຸງ: 05 ພຶດສະພາ 2023*
*ການຕອບຮັບ: 02 ກໍລະກົດ 2023*

**ບົດຄັດຫຍໍ້**

ຈຸດປະສົງຂອງບົດຄົ້ນຄວ້າຄັ້ງນີ້ ເພື່ອສຶກສາປະສິດທິພາບຂອງບົດສອນ, ສຶກສາປະສິດທິຜົນການຮຽນຂອງນັກສຶກສາ ເລື່ອງການການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳ ແລະ ເພື່ອສຶກສາຄວາມເພິ່ງພໍໃຈຂອງຂອງນັກສຶກສາປີ 2 ທີ່ມີຕໍ່ການຈັດການຮຽນຮູ້ແບບ CIRC. ການຄົ້ນຄວ້າຄັ້ງນີ້ ເປັນການຄົ້ນຄວ້າແບບທົດລອງ. ກຸ່ມທົດລອງ ທີ່ໃຊ້ໃນການຄົ້ນຄວ້າຄື ນັກສຶກສາປີ 2 ພາກວິຊາຄູພາສາລາວ - ວັນນະຄະດີ,ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ ພາກຮຽນທີ 1 ສົກຮຽນ 2020 – 2021 ຈຳນວນ 24 ຄົນ,ຜູ້ຄົ້ນຄວ້າເລືອກມາເປັນກຸ່ມທົດລອງໄດ້ມາໂດຍການເລືອກແບບເຈາະຈົງ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ຜູ້ຄົ້ນຄວ້າໄດ້ສ້າງຂຶ້ນເອງໂດຍຜ່ານການຫາຄຸນນະພາບຈາກຜູ້ຊ່ຽວຊານ ແລະ ຜູ້ຮຽນ ເຊິ່ງປະກອບມີ 1) ບົດສອນຈຳນວນ 3 ບົດ. 2) ແບບທົດສອບວັດຜົນສຳເລັດທາງການຮຽນຊະນິດເລືອກຕອບ 4 ຕົວເລືອກ ຈຳນວນ 1 ຊຸດມີ 30 ຂໍ້ , ແບບສອບຖາມຄວາມເພິ່ງພໍໃຈໃນການຮຽນ ແບບມາດຕາສ່ວນປະມານຄ່າ 5 ລະດັບ ຈຳນວນ 12 ຂໍ້ . ສະຖິຕິທີ່ໃຊ້ໃນການວິເຄາະມີຄື ເປີເຊັນ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

ຜົນການຄົ້ນຄວ້າພົບວ່າ ປະສິດທິພາບຂອງບົດສອນ ວິຊາອັກສອນທຳ ເລື່ອງການການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳ ຂອງນັກສຶກສາປີ 2 ໂດຍການນຳໃຊ້ວິທີສອນແບບ CIRC ມີປະສິດທິພາບ (E1/E2) ເທົ່າກັບ 85.49/89.31 ສະແດງວ່າປະສິດທິພາບເປັນໄປຕາມເກນທີ່ຕັ້ງໄວ້ 80/80. ດັດຊະນີປະສິດທິຜົນຂອງການຮຽນຮູ້ ວິຊາອັກສອນທຳ ເລື່ອງການການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳ ຂອງນັກສຶກສາປີ 2 ໂດຍການນຳໃຊ້ວິທີສອນແບບ CIRC ມີປະສິດທິຜົນ (EI) ມີຄ່າເທົ່າກັບ 0.7307 ສະແດງວ່າຜູ້ຮຽນມີຄວາມຮູ້ເພີ່ມຂຶ້ນຄິດເປັນເປີເຊັນເທົ່າກັບ 73.07 ແລະ ຄວາມເພິ່ງພໍໃຈຂອງນັກຮຽນທີ່ມີຕໍ່ການຈັດການຮຽນ - ການສອນວິຊາອັກສອນທຳ ເລື່ອງການການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳ ຂອງນັກສຶກສາປີ 2 ໂດຍນຳໃຊວິທີສອນແບບ CIRC ມີຄະແນນສະເລ່ຍ ($\bar{X}$ = 4.47) ຄ່າ (S.D = 0.64) ເມື່ອທຽບກັບເກນແລ້ວນັກຮຽນມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ .

**ຄຳສັບສຳຄັນ:** *ປະສິດທິພາບບົດສອນ, ດັດສະນີປະສິດທິຜົນການຮຽນຮູ້, ຄວາມເພິ່ງພໍໃຈຂອງນັກສຶກສາ*

# The Development of Thamma Alphabet Reading and Writing Skill of Students Lao Language and Literature Year 2, Using Cooperative Integrated Reading and Composition or Circ Technique

**Vandthong NANTHAVONG[1*], Visien Thongthavy[2], Phonesavanh KAMKEINGYOM[3], Phaivone NANTHAVONG[4]**

*Department of Lao language-literature teacher, Faculty of Education, National University of Laos, Lao PDR*

***[1*]Correspondence:***
*Vandthong NANTHAVONG, Department of Lao language - literature teacher, Faculty of Education, National University of Laos, Tel: +856 20 58565757, E-mail: vandthong2012@gmail.com*
*[2,3,4]Department of Lao language-literature teacher, Faculty of Education, National University of Laos*

***Article Info:***
*Submitted: Nov 21, 2022*
*Revised: May 05, 2023*
*Accepted: Jul 02, 2023*

## Abstract

The objective of this research were to 1) examine the effectiveness of the lesson on the development of reading and writing skills. 2) study the learning effectiveness of students regarding the development of reading and writing skills on Tham alphabet and explore the satisfaction of 2nd year students with the CIRC style of learning at Department of Lao language and Literature, faculty of education, National university of Laos. This research was an experimental research. The population used in the research were 2nd year and 3rd year students of Lao Language-Literature Department, Faculty of Education, National University of Laos 1st semester 2020-2021 academic year in 2 rooms a total of 53 students. The experimental group in the research were 2nd year students with 24 people obtained by specific selection. The research tools were created by the researcher through qualitative research from experts and students which include 1) 3 Lesson plan; 2) Study achievement test form with choose answer 4 options in 1 set has 30 questions, questionnaire about satisfaction in learning with 5 rating scale 12 questions. The statistics used in the analysis were applied intern of percentage, mean and standard deviation.

The result revealed that: The effectiveness of the teaching lesson on writing and reading skills of 2nd year students by using the CIRC teaching method has an efficiency of E1/E2 equal to 85.49/89.31 showed that the efficiency is according to the set criteria of 80/80. The effectiveness index of literacy learning about the development of reading and writing skills of 2nd students by using effective CIRC teaching methods (E.I value equal to 0.7307 (showed that students have developed knowledge as a percentage equal to 73.07, and the satisfaction of the students with the management of instruction of Tham alphabet on reading and writing skill of 2nd year students using the CIRC teaching method was at high level with $\overline{X} = 4.47$ and S.D = 0.64).

**Key words**: *Effectiveness of the teaching lesson, effectiveness index, satisfaction*

## 1. ພາກສະເໜີ

ການສຶກສາ ແມ່ນຂະບວນວິວັດແຫ່ງການຮຽນ-ການສອນທາງດ້ານວິທະຍາສາດສັງຄົມ ແລະ ການຄົ້ນຄວ້າທິດສະດີ, ພຶດຕິກຳ ເພື່ອສ້າງຄົນໃຫ້ມີການຂະຫຍາຍຕົວຮອບດ້ານ, ການເມືອງ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ມີຄວາມສາມາດ, ມີວິຊາຊີບ, ມີສຸຂະພາບ ມີຄວາມສີວິໄລທາງດ້ານຈິດໃຈ, ມີສິລະປະ, ມີລະບຽບວິໄນ, ມີນ້ຳໃຈຮັກຊາດ ຮັກລະບອບປະຊາທິປະໄຕປະຊາຊົນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.

ເພື່ອເປັນການຜັນຂະຫຍາຍແຜນຍຸດທະສາດດັ່ງກ່າວໄປສູ່ການປະຕິບັດຕົວຈິງນັ້ນ ໃນການຈັດການຮຽນ-ການສອນໃນລະດັບຊັ້ນມັດທະຍົມສຶກສາກໍ່ມີຄວາມສຳຄັນ ແລະຈຳເປັນຢ່າງຍິ່ງໃນການພັດທະນາການຮຽນການສອນໃຫ້ບັນລຸຕາມ 3 ລັກສະນະຂອງການສຶກສາ ເຊັ່ນ: ລັກສະນະຊາດ, ລັກສະນະວິທະຍາສາດ ແລະ ທັນສະໄໝ, ລັກສະນະມະຫາຊົນ ແລະ ຕາມ 5 ຫຼັກມູນການສຶກສາເຊັ່ນ: ດ້ານຄຸນສົມບັດສຶກສາ, ປັນຍາສຶກສາ, ສິລະປະສຶກສາ, ພາລະສຶກສາ ແລະ ແຮງງານສຶກສາ ເພື່ອກຽມຄວາມພ້ອມທາງດ້ານຄວາມຮູ້ຄວາມສາມາດ, ທັກສະທີ່ຈະໄປສືບຕໍ່ ໃນການຮຽນວິຊາສະເພາະທີ່ສູງຂຶ້ນ (Ministry of Education, 2013).

ພັກ ແລະ ລັດຖະບານແຫ່ງ ສປປ ລາວ ໄດ້ມີນະໂຍບາຍໃນການພັດທະນາການສຶກສາເພື່ອສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດສູງເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ - ສັງຄົມ ແລະ ພັກລັດຖະບານຍັງເນັ້ນໜັກເຖິງບັນຫາໃນການປົກປັກຮັກສາ, ເສີມຂະຫຍາຍ ແລະ ນຳໃຊ້ພາສາປະຈຳຊາດນັ້ນກໍຄື ພາສາລາວທີ່ເປັນພາສາແມ່ (Watchara, 2005)

ພາກວິຊາຄູພາສາລາວ-ວັນນະຄະດີ ແມ່ນພາກວິຊາໜຶ່ງທີ່ແຍກອອກມາຈາກພາກວິຊາສ້າງຄູພາສາສາດ ເຊິ່ງຂຶ້ນກັບຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດມີພາລະບົດບາດໃຫ້ການສຶກສາລະດັບປະລິນຍາຕີ ແລະ ຈາລິຍະທຳ, ຄຸນສົມບັດ, ວິໄສທັດ, ມີຄວາມສາມາດໃນວິຊາຊີບຄູ, ແກ້ໄຂບັນຫາຢ່າງສ້າງສັນ, ຮູ້ຈັກອະນຸລັກວັດທະນະທຳ ແລະຮີດຄອງປະເພນີອັນດີງາມຂອງຊາດລາວ ແລະ ພັດທະນາຕົນເອງໃຫ້ທັນກັບສະພາບການປ່ຽນແປງຂອງສັງຄົມ, ພ້ອມທັງມີໜ້າທີສ້າງໃຫ້ນັກສຶກສາສາມາດສອນວິຊາພາສາລາວ ແລະ ວັນນະຄະດີທີ່ມີໃນຫຼັກສູດຊັ້ນມັດທະຍົມ, ສ້າງໃຫ້ນັກສຶກສາສາມາດໃນການແກ້ໄຂບັນຫາຢ່າງປະດິດສ້າງ ແລະພັດທະນາ ຄວາມຮູ້ດ້ວຍຂະບວນການວິໄຈ, ສ້າງໃຫ້ນັກສຶກສາສາມາດມີໂລກະທັດອັນຖືກຕ້ອງ ແລະມີຈັນຍາບັນໃນອາຊີບຄູ, ສ້າງໃຫ້ນັກສຶກສາສາມາດມີມະນຸດສຳພັນທີ່ດີ, ສາມາດເຮັດວຽກກັບຄົນອື່ນໄດ້ ພ້ອມທັງສ້າງໂອກາດໃຫ້ແກ່ຄູທີຮຽນຈົບປະລິນຍາຕີໄດ້ມີໂອກາດມາຮຽນຕໍ່ຂັ້ນສູງຕໍ່ໄປ (Thisana, 2007).

ການຈັດການຮຽນ-ການສອນຕາມຫຼັກສູດໃນຊັ້ນປະລິນຍາຕີ ເປັນປັດໄຈທີ່ສຳຄັນທີ່ສຸດໃນການກຽມຄວາມພ້ອມທາງດ້ານຄວາມຮູ້ພື້ນຖານທາງດ້ານວິທະຍາສາດໃຫ້ກັບນັກສຶກສາໃນແຕ່ລະຂັ້ນ ແລະ ພັດທະນານັກຮຽນໃຫ້ໄປຕາມ 5 ຫຼັກມູນການສຶກສາຂອງຊາດເຊັ່ນ: ຄຸນສົມບັດສຶກສາ, ປັນຍາສຶກສາ, ສິລະປະສຶກສາ, ພາລະສຶກສາ ແລະແຮງງານສຶກສາ ເພື່ອສ້າງນັກຮຽນໃຫ້ມີການພັດທະນາຢ່າງຮອບດ້ານ ເພື່ອກຽມຄວາມພ້ອມເພື່ອຮັບໃຊ້ຊາດ ຫຼືສືບຕໍ່ຮຽນໃນລະດັບຊັ້ນປະລິນຍາໂທ ແລະປະລິນຍາເອກ.

ເພື່ອຕອບສະໜອງຕາມຫຼັກມູນການສຶກສາຂອງຊາດ ທາງກະຊວງສຶກສາໄດ້ສ້າງຫຼັກສູດເພື່ອໃຊ້ເຂົ້າໃນການຈັດການຮຽນ-ການສອນລະດັບປະລິນຍາຕີ ເຊິ່ງໃນນັ້ນການຈັດການຮຽນ-ການສອນວິຊາອັກສອນທຳກໍມີຄວາມສຳຄັນ ແລະ ຈຳເປັນຢ່າງຍິ່ງ.

ການຮຽນຮູ້ແບບການຮ່ວມມືດ້ວຍວິທີ CIRC (Cooperative Integrated Reading and Composition) ເປັນວິທີການສອນວິທີໜຶ່ງໃນວິທີການສອນແບບຮ່ວມມືກັນ (Cooperative Learning Methods) ເປັນວິທີທີ່ອອກແບບຂຶ້ນເພື່ອສອນດ້ານການອ່ານ ແລະ ການຂຽນໂດຍສະເພາະແມ່ນສາມາດພັດທະນາປະສິດທິຜົນທາງດ້ານການຮຽນຂອງນັກຮຽນໄດ້ທັງຜູ້ທີ່ຮຽນເກັ່ງ, ປານກາງ ແລະ ຮຽນອ່ອນໄດ້ (Thida, 2009).

ວິຊາອັກສອນທຳ ເປັນວິຊາສະເພາະ ໃນສາຍວິຊາຄູພາສາລາວ-ວັນນະຄະດີ ເຊິ່ງອັກສອນທຳແມ່ນວິຊາໜຶ່ງທີ່ຄົ້ນຄວ້າກ່ຽວກັບປະຫວັດຄວາມເປັນມາກ່ຽວກັບອັກສອນທຳ, ສາເຫດທີ່ພາໃຫ້ເອີ້ນວ່າ ຕົວທຳ, ບາງບັນຫາກ່ຽວກັບການຂຽນອັກຕົວທຳ, ຄົ້ນຄວ້າກ່ຽວການປະກອບສ້າງຂອງຕົວທຳເຫຼົ່ານີ້ເປັນຕົ້ນ.

ຈຸດປະສົງຫຼັກ ຂອງການຮຽນວິຊາອັກສອນທຳ ໃນພາກວິຊາຄູພາສາລາວ-ວັນນະຄະດີລະດັບປະລິນຍາຕີ ເພື່ອໃຫ້ນັກສຶກສາຮູ້ໄດ້ເຖິງທີ່ມາ, ຄວາມສຳຄັນຂອງຕົວທຳໃນສັງຄົມລາວ, ອ່ານ ແລະ ຂຽນພະຍັນຊະນະ, ສະຫຼະ, ຕົວເຟື້ອງ. ຮູ້ໄດ້ເຖິງການປະກອບສ້າງຄຳ, ການປະສົມຄຳ, ປະໂຫຍກ ແລະ ອ່ານອັກສອນທຳ, ຮູ້ວິທີການຂຽນຕົວຫຍໍ້, ການໃຊ້ຕົວອັກສອນໃນຮູບແບບຕ່າງໆ ແລະ ພ້ອມດຽວກັນນັ້ນກໍແມ່ນໃຫ້ນັກສຶກສາສາມາດຂຽນ ແລະ ອ່ານຕົວ

ອັກສອນທຳໄດ້. ແຕ່ໃນຕົວຈິງຜ່ານຈາກການປະການສອນ ແລະ ການປະເມີນຕົວຈິງພົບວ່າ: ນັກສຶກສາພາກວິຊາຄູພາສາລາວ-ວັນນະຄະດີລະດັບປະລິນຍາຕີ ຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ ເປັນຕົ້ນບັນຫາດ້ານການອ່ານ, ການຂຽນ, ການປະກອບຄຳ ຈາກບັນຫາດັ່ງກ່າວນີ້ເຮັດໃຫ້ຜູ້ວິໄຈມີຄວາມສົນໃຈ ສຶກສາສະພາບການຈັດການຮຽນ-ການສອນວິຊາອັກສອນທຳ ໃນພາກວິຊາຄູພາສາລາວ-ວັນນະຄະດີ (Chaiwat, 2012).

ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ເພື່ອຈະເປັນປະໂຫຍດໃຫ້ແກ່ຄູອາຈານທີ່ສອນພາສາລາວເວົ້າລວມ ເວົ້າສະເພາະຄູອາຈານທີ່ສອນວິຊາອັກສອນທຳ ນຳເອົາຜົນການວິໄຈໄປໃຊ້ເປັນແນວທາງໃນການແກ້ບັນຫາຕໍ່ການຈັດການຮຽນການສອນວິຊາອັກສອນທຳໃຫ້ດີຂຶ້ນ.

ຈຸດປະສົງຂອງການຄົ້ນຄວ້າ ແມ່ນ 1) ເພື່ອສຶກສາປະສິດທິພາບຂອງບົດສອນ ເລື່ອງການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳນັກສຶກສາ ພາກວິຊາສ້າງຄູພາສາລາວ-ວັນນະຄະດີ ໂດຍການນຳໃຊ້ວິທີສອນແບບ CIRC ໃຫ້ມີປະສິດທິພາບຕາມເກນ 80/80, 2) ເພື່ອສຶກສາດັດຊະນີປະສິດທິຜົນການຮຽນຂອງນັກຮຽນເລື່ອງ ພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳນັກສຶກສາ ພາກວິຊາສ້າງຄູພາສາລາວ-ວັນນະຄະດີ ໂດຍການນຳໃຊ້ວິທີສອນແບບ CIRC ແລະ 3) ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກສຶກສາ ພາກວິຊາສ້າງຄູພາສາລາວ-ວັນນະຄະດີ ທີ່ມີຕໍ່ການຈັດການຮຽນຮູ້ແບບ CIRC.

## 2. ອຸປະກອນ ແລະ ວິທີການ

### 2.1 ການອອກແບບການສຶກສາ

ການສຶກສາຄົ້ນຄວ້າຄັ້ງນີ້ເປັນການຄົ້ນຄວ້າແບບທົດລອງຕາມແບບ One Group Pretest -Posttest Design ສະແດງໃນຕາຕະລາງດັ່ງນີ້ (Luan and Angkhana, 2000), (Hidayat, 2017) (Abbuhl and co-authors, 2018):

ຕາຕະລາງ 1: ຮູບແບບການທົດລອງ

| ສອບກ່ອນ | ທົດລອງ | ສອບຫຼັງ |
|---|---|---|
| $T_1$ | X | $T_2$ |

X ແທນ ການຈັດກິດຈະກຳການຮຽນ - ການສອນທົດລອງ (Treatment)

$T_1$ ແທນ ໃຫ້ການທົດສອບກ່ອນການທົດລອງ (Pre-test)

$T_2$ ແທນການທົດສອບຫຼັງການທົດລອງ (Post-test)

### 2.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

1) ບົດສອນວິຊາອັກສອນທຳ ໂດຍການຮຽນຮູ້ແບບຮ່ວມມືເທັກນິກ CIRC ຈຳນວນ 3 ບົດ, ໃຊ້ເວລາສອນບົດລະ 2 ຊົ່ວໂມງ ລວມ 6 ຊົ່ວໂມງ.

2) ແບບທົດສອບວັດຄວາມສາມາດໃນການອ່ານຈັບໃຈຄວາມແບບປາລະໄນຊະນິດເລືອກຕອບ 4 ຕົວເລືອກ ຈຳນວນ 30 ຂໍ້.

3) ແບບສອບຖາມຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການຈັດການຮຽນຮູ້ຮູບແບບ CIRC ຈຳນວນ 12 ຂໍ້.

### 2.3 ຂອບເຂດຂອງການສຶກສາ

#### 2.3.1 ຂອບເຂດທາງດ້ານກຸ່ມທົດລອງ

ໃນການສຶກສາໃນຄັ້ງນີ້ ຄະນະຜູ້ສຶກສາໄດ້ກຳນົດກຸ່ມທົດລອງທີ່ສຶກສາຄັ້ງນີ້ແມ່ນນັກສຶກສາປີ 2 ພາກວິຊາຄູພາສາລາວ - ວັນນະຄະດີ,ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ ພາກຮຽນທີ 1 ສົກຮຽນ 2020-2021 ຈຳນວນ 24 ຄົນ ໄດ້ມາໂດຍການເລືອກແບບເຈາະຈົງ.

#### 2.3.2 ຂອບເຂດທາງດ້ານເນື້ອໃນ

ໃນການສຶກສາໃນຄັ້ງນີ້ ຄະນະຜູ້ສຶກສາໄດ້ກຳນົດຂອບເຂດການສຶກສາໂດຍ ກຳນົດບົດສອນຕາມຮູບແບບການສອນ ແບບສູນການຮຽນ ຈຳນວນ 3 ບົດສອນ (1)ບົດກະວີ ລືມຕົວເສຍຕົນ, (2) ບົດເລື່ອງ ເສນາໝາກຂີ້ກາ(3) ບົດກະວີ ສິບຍາວເປັນຂອບເຂດເນື້ອໃນຂອງການສຶກສາ ແລະ ຈະໃຊ້ເວລາສອນບົດລະ 2 ຊົ່ວໂມງ, ລວມທັງໝົດ 6 ຊົ່ວໂມງ

### 2.4 ວິທີເກັບກຳຂໍ້ມູນ

ໃນການຄົ້ນຄວ້ານີ້ ທີມຄົ້ນຄວ້າໄດ້ມີວິທີເກັບກຳຂໍ້ມູນຂອງການຄົ້ນຄວ້າຕາມຂັ້ນຕອນດັ່ງນີ້:

ການຄົ້ນຄວ້າຄັ້ງນີ້ທາງກຸ່ມເປັນຜູ້ທົດລອງສອນດ້ວຍຕົນເອງຈົນຄົບຕາມບົດສອນທີ່ກຳນົດໄວ້ໂດຍໃຊ້ບົດສອນແບບ CIRC ເຊິ່ງລວມທັງໝົດມີ 3 ບົດສອນ ແລະ ເກັບຂໍ້ມູນດັ່ງນີ:

1) ນຳໜັງສືອະນຸຍາດເກັບກຳຂໍ້ມູນຈາກຄະນະບໍດີຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ. ສະເໜີຕໍ່ຫົວໜ້າພາກວິຊາຄູພາສາລາວ - ວັນນະຄະດີ ເພື່ອແຈ້ງຈຸດປະສົງກ່ຽວກັບການຈັດກິດຈະກຳການຮຽນ - ການສອນ.

2) ເລືອກກຸ່ມທົດລອງ ແລະ ແຈ້ງເວລາໃຫ້ນັກສຶກສາຮູ້.

3) ທົດສອບກ່ອນຮຽນ ( Pre-tes t) ໂດຍໃຊ້ແບບທົດສອບຜົນສຳເລັດທາງການຮຽນຂອງນັກ ຮຽນຈຳນວນ

30 ຂໍ້, ທົດສອບກັບນັກສຶກສາປີ 2 ຄູພາສາລາວ - ວັນນະຄະດີ, ຄະນະສຶກສາສາດ, ຫຼັງຈາກ ນັ້ນບັນທຶກຄະແນນຈາກການທົດສອບເພື່ອປຽບທຽບກັບຄະແນນທົດສອບຫຼັງຮຽນ.

4) ໃຊ້ບົດສອນແບບ CIRC ທີ່ສ້າງຂຶ້ນໄປສອນກັບກຸ່ມທົດສອບກັບນັກສຶກສາປີ 2 ຄູພາສາລາວ - ວັນນະຄະດີ , ຄະນະສຶກສາສາດຈຳນວນ 24 ຄົນ ພາກຮຽນທີ 1 ສົກສຶກສາ 2020 - 2021.

5) ຫຼັງຈາກສິ້ນສຸດການສອນທັງໝົດແລ້ວ ໄດ້ມີການທົດສອບຫຼັງການຮຽນ ( Post-test ) ໂດຍໃຊ້ແບບທົດສອບຜົນສຳເລັດທາງການຮຽນຂອງນັກຮຽນເພື່ອນຳຂໍ້ມູນໄປວິເຄາະ.

## 3. ຜົນໄດ້ຮັບ

ໃນການສຶກສາການພັດທະນາທັກສະການອ່ານ ແລະ ການຂຽນ ອັກສອນທຳ ຂອງນັກສຶກສາຄູພາສາລາວ - ວັນນະຄະດີ ປີ 2 ຄະນະສຶກສາສາດ ໂດຍນຳໃຊ້ກິດຈະກຳການຮຽນຮູ້ແບບ CIRC ມີຜົນໄດ້ຮັບຕາມລຳດັບດັ່ງນີ້:

1) ຜົນໄດ້ຮັບດ້ານປະສິດທິພາບຂອງບົດສອນ ວິຊາອັກສອນທຳ ເລື່ອງການການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳ ຂອງນັກສຶກສາປີ 2 ໂດຍການນຳໃຊ້ວິທີສອນແບບ CIRC.

ໃນການສຶກສາປະສິດທິພາບບົດສອນວິຊາ ອັກສອນທຳ ຂອງນັກສຶກສາຄູພາສາລາວ - ວັນນະຄະດີ ປີ 2 ຄະນະສຶກສາສາດ  ຈຳນວນ 24ຄົນ ໂດຍນຳໃຊ້ກິດຈະກຳການຮຽນຮູ້ແບບ CIRC,ເຊິ່ງມີຜົນການວິເຄາະດັ່ງນີ້:

ຜົນການວິເຄາະປະສິດທິພາບຂອງບົດສອນ ວິຊາອັກສອນທຳ ເລື່ອງການການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳ ພົບວ່າ ນັກສຶກສາຄູພາສາລາວ - ວັນນະຄະດີປີ 2ໄດ້ຄະແນນຈາກຂະບວນການ (E1) ຈາກບົດສອນທີ1, ບົດສອນທີ 2, ບົດສອນທີ 3 ຂອງການຈັດກິດຈະກຳການຮຽນ-ການສອນ ໂດຍນຳໃຊ້ວິທີສອນແບບ CIRC ປະສິດທິພາບຂອງຂະບວນການ (E1) ເທົ່າກັບ 85.49 ແລະ ປະສິດທິຜົນຮັບ (E2) ແມ່ນ 89.31 ສະແດງວ່າບົດສອນມີປະສິດທິພາບສູງກວ່າເກນທີ່ຕັ້ງໄວ້ 80/80.

2) ຜົນໄດ້ຮັບດ້ານດັດຊະນີປະສິດທິຜົນຂອງການຮຽນຮູ້ ວິຊາອັກສອນທຳ ເລື່ອງການການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳ ຂອງນັກສຶກສາປີ 2  ໂດຍການນຳໃຊ້ວິທີສອນແບບ CIRC ພົບວ່າ ດັດສະນີປະສິດທິຜົນ (E.I) =  0.7307 ເຊິ່ງຫຼາຍກ່ວາເກນການຍອມຮັບປະສິດທິຜົນ 0.50 ນັ້ນສະແດງວ່າການນຳໃຊ້ບົດສອນໂດຍນຳໃຊ້ວິທີສອນແບບ CIRC ຂອງນັກສຶກສາປີ 2 ວິຊາອັກສອນທຳ ເລື່ອງການພັດທະນາທັກສະການພັດທະນາການອ່ານ ແລະການຂຽນອັກສອນທຳ  ມີປະສິດທິຜົນ 73,07% ຊ່ວຍໃຫ້ນັກຮຽນເກີດການຮຽນຮູ້ໄດ້ແທ້ຈິງ.

3) ຜົນໄດ້ຮັບດ້ານຄວາມເພິ່ງພໍໃຈຂອງນັກຮຽນທີ່ມີຕໍ່ການຈັດການຮຽນ - ການສອນວິຊາອັກສອນທຳ ເລື່ອງການການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳ ຂອງນັກສຶກສາປີ 2 ໂດຍນຳໃຊວິທີສອນແບບ CIRC

ຜົນການວິເຄາະຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການຈັດການຮຽນແບບ CIRC ຂັ້ນກະກຽມ ພົບວ່າ ລະດັບຄວາມເພິ່ງພໍໃຈຕໍ່ການຈັດການຮຽນການສອນວິຊາອັກສອນທຳ ເລື່ອງການພັດທະນາທັກສະການພັດທະນາການອ່ານ ແລະ ການຂຽນອັກສອນທຳ ໂດຍການໃຊ້ວິທີສອນແບບ CIRC ໃນດ້ານການກະກຽມ ໂດຍລວມຈັດຢູ່ໃນລະດັບມີຄວາມເພິ່ງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍ $\overline{X}$ = 4.45, S.D =0.62, ເມື່ອພິ ຈາລະນາເປັນລາຍຂໍ້ພົບວ່າ ຂໍ້ທີ່ມີຄ່າສະເລ່ຍສູງສຸດຄື ນັກສຶກສາເຂົ້າໃຈຄູແນະນຳວິທີໃຫ້ຄະແນນໃນການເຮັດວຽກກຸ່ມລະອຽດດີ $\overline{X}$ = 4.50, S.D =0.58 ຈັດຢູ່ໃນເກນມີ ຄວາມເພິ່ງພໍໃຈຫຼາຍ ແລະ ຂໍ້ທີ່ມີຄ່າສະເລ່ຍຕໍ່າສຸດຄື ນັກສຶກສາມີຄວາມເຂົ້າໃຈການແບ່ງກຸ່ມຊັດເຈນ $\overline{X}$ =4.41, S.D =0.71 ຈັດຢູ່ໃນເກນມີຄວາມເພິ່ງພໍໃຈໃນລະດັບຫຼາຍ.

ຜົນການວິເຄາະຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການຈັດການຮຽນແບບ CIRC ຂັ້ນສອນ ພົບວ່າ ລະດັບຄວາມເພິ່ງພໍໃຈຕໍ່ການຈັດການຮຽນການສອນວິຊາອັກສອນທຳ ເລື່ອງການພັດທະນາທັກສະການພັດທະນາການອ່ານ ແລະ ການຂຽນອັກສອນທຳ ໂດຍການໃຊ້ວິທີສອນແບບ CIRC ໃນດ້ານການສອນ ໂດຍລວມຈັດຢູ່ໃນລະດັບມີຄວາມເພິ່ງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍ $\overline{X}$  = 4.49, S.D  =0.67 ເມື່ອພິຈາລະນາເປັນລາຍຂໍ້ພົບວ່າ ຂໍ້ທີ່ມີຄ່າສະເລ່ຍສູງສຸດຄື ນັກສຶກສ  ເຂົ້າໃຈ ແລະ ຈື່ບົດຮຽນໄດ້ດີເມື່ອຮຽນແບບນີ້ ແລະ ການທວນຄືນບົດຮຽນເກົ່າເຮັດໃຫ້ນັກຮຽນຈື່ ແລະ ເຂົ້າໃຈບົດຮຽນເກົ່າດີຂຶ້ນ $\overline{X}$ = 4.54, S.D = 0.66 ຈັດຢູ່ໃນເກນມີ ຄວາມເພິ່ງພໍໃຈຫຼາຍທີ່ສຸດ ແລະ ຂໍ້ທີ່ມີຄ່າສະເລ່ຍຕໍ່າສຸດຄື ການນຳສະເໜີຂອງຄູເຮັດໃຫ້ນັກສຶກສາມີຄວາມສົນໃຈ, ມີຄວາມມ່ວນຊື່ນ $\overline{X}$  =  4.42, S.D = 0.78 ຈັດຢູ່ໃນເກນມີຄວາມເພິ່ງພໍໃຈໃນລະດັບຫຼາຍ.

ຜົນການວິເຄາະຄວາມເພິ່ງພໍໃຈຂອງນັກຮຽນ ຕໍ່ການຈັດການຮຽນຮູ້ແບບ CIRC ທັງ 3 ດ້ານ ພົບວ່າ ລະດັບ

ຄວາມເພິ່ງພໍໃຈຕໍ່ການຈັດການຮຽນການສອນວິຊາອັກສອນທໍາ ເລື່ອງການພັດທະນາທັກສະການພັດທະນາການອ່ານ ແລະການຂຽນອັກສອນທໍາໂດຍການໃຊ້ວິທີສອນແບບ CIRC ທັງ 3 ດ້ານໂດຍລວມຈັດຢູ່ໃນລະດັບມີຄວາມເພິ່ງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍ $\overline{X}$ = 4.47, S.D =0.64 ເມື່ອພິຈາລະນາເປັນລາຍຂໍ້ພົບວ່າ ຂໍ້ທີ່ມີຄ່າສະເລ່ຍສູງສຸດຄື ຂັ້ນສອນ $\overline{X}$=4.49, S.D=0.67 ຈັດຢູ່ໃນເກນມີ ຄວາມເພິ່ງພໍໃຈຫຼາຍ ແລະ ຂໍ້ທີມີຄ່າສະເລ່ຍຕໍ່າສຸດຄື ຂັ້ນກະກຽມ $\overline{X}$ =4.45, S.D=0.62 ຈັດຢູ່ໃນເກນມີຄວາມເພິ່ງພໍໃຈໃນລະດັບຫຼາຍ.

## 4. ວິພາກຜົນ

ຈາກການສຶກສາການພັດທະນາທັກສະການອ່ານ ແລະ ການຂຽນ ອັກສອນທໍາ ໂດຍການນໍາໃຊ້ວິທີສອນແບບ CIRC ທີ່ຜູ້ຄົ້ນຄວ້ານໍາໃຊ້ເຂົ້າໃນການຈັດການຮຽນສໍາລັບນັກສຶກສາຄູພາສາລາວ - ວັນນະຄະດີ ປີ 2 ຄະນະສຶກສາສາດເຮັດໃຫ້ວຽກງານການສອນມີປະສິດທິພາບ ແລະຖືກນໍາໃຊ້ຢ່າງຫຼວງຫຼາຍ, ເປັນວິທີການສອນທີ່ເໝາະສົມເພື່ອນໍາໃຊ້ເຂົ້າໃນການພັດທະນາທັກສະການອ່ານ ແລະການຂຽນ ອັກສອນທໍາໃຫ້ສູງຂຶ້ນເທື່ອລະກ້າວ.ນອກຈາກນັ້ນ ວິທີສອນແບບ CIRCຍັງພັດທະນາທັກສະການເຮັດວຽກກຸ່ມ, ການແລກປ່ຽນຄວາມຄິດເຫັນ, ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນສະມາຊິກແຕ່ລະຄົນພາຍໃນກຸ່ມມີຄວາມຮັບຜິດຊອບຕໍ່ການຮຽນຂອງຕົນເອງ, ຮັບຜິດຊອບຕໍ່ການຮຽນຮູ້ຂອງເພື່ອນ ເພາະຄວາມສໍາເລັດຂອງບຸກຄົນຄືຄວາມສໍາເລັດຂອງກຸ່ມໃຫ້ແກ່ນັກສຶກສາຄູອີກດ້ວຍ.

ເນື່ອງຈາກວ່າວິທີສອນແບບ CIRC ນັກສຶກສາໄດ້ເຮັດວຽກກຸ່ມ, ການແລກປ່ຽນຄວາມຄິດເຫັນ, ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນສະມາຊິກແຕ່ລະຄົນພາຍໃນກຸ່ມ, ບົດສອນສອນແບບ CIRC ເປັນການອອກແບບກິດຈະກໍາການຮຽນຮູ້ທີ່ສະໜອງຄວາມຕ້ອງການ ແລະ ວິທີການຮຽນຂອງນັກສຶກສາ, ທີ່ຄູເປີດໂອກາດໃຫ້ຜູ້ຮຽນມີສ່ວນຮ່ວມ, ມີບົດບາດໃນການເຮັດກິດຈະກໍາໃຫ້ຜູ້ຮຽນຮູ້ຈັກຄົ້ນຄິດ ແລະ ສາມາດອະທິບາຍເນື້ອໃນບົດຮຽນຢ່າງມີເຫດຜົນ. ການຈັດການຮຽນຮູ້ຕ້ອງເລືອກວິທີສອນທີ່ເໝາະສົມ ໂດຍຄໍານຶງເຖິງເນື້ອໃນ, ຕົວຊີ້ວັດ ແລະ ຄວາມສາມາດຂອງຜູ້ຮຽນເພື່ອເຮັດໃຫ້ຜູ້ຮຽນເກີດການຮຽນຮູ້ໄດ້ຫຼາກຫຼາຍ. ສອດຄ່ອງກັບ Mutita (2017) ໄດ້ກ່າວເຖິງການຈັດການຮຽນຮູ້ແບບ CIRC ວ່າ ເປັນວິທີການສອນທີ່ເນັ້ນຜູ້ຮຽນໄດ້ພັດທະນາທັດສະການອ່ານ ແລະ ການຂຽນໄປພ້ອມກັບການຮຽນເປັນກຸ່ມ, ຜູ້ຮຽນຈະເກີດການ ຮຽນຮູ້ເນື້ອຫາສາລະດ້ວຍຕົນເອງ ແລະ ດ້ວຍຄວາມຮ່ວມມືຊ່ວຍເຫຼືອຈາກເພື່ອນໆ ລວມທັງໄດ້ພັດທະນາທັກສະຂະບວນການຕ່າງໆໂດຍສະເພາະການເຮັດວຽກຮ່ວມກັບຄົນອື່ນ, ການປະສານສໍາພັນກັບໝູ່ເພື່ອນ, ທັກສະການຄິດ, ການສະແຫວງຫາຄວາມຮູ້ ແລະ ການແກ້ໄຂບັນຫາ ຈະເຫັນວ່າເປັນເປັນກິດຈະກໍາການຮຽນ - ການສອນທີ່ຄໍານຶງເຖິງຜູ້ຮຽນເປັນສໍາຄັນສິ່ງຜົນໃຫ້ເກີດບັນຍາກາດໃນການຮຽນຮູ້ທີ່ດີເພາະນັກສຶກສາພາຍໃນກຸ່ມໄດ້ຊ່ວຍເຫຼືອກັນຈົນປະສົບຜົນສໍາເລັດກໍໃຫ້ເກີດຄວາມພູມໃນໃນການຮຽນ.

ດັດຊະນີປະສິດທິຜົນຂອງການຮຽນຮູ້ ວິຊາອັກສອນທໍາ ເລື່ອງການການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທໍາ ຂອງນັກສຶກສາປີ 2 ໂດຍການນໍາໃຊ້ວິທີສອນແບບ CIRC ເປັນຮູບແບບການຈັດກິດຈະກໍາການຮຽນຮູ້ທີ່ພັດທະນາຂຶ້ນເພື່ອພັດທັກສະການອ່ານ ແລະ ການຂຽນໂດຍກົງມີຄວາມເໝາະສົມສໍາລັບນໍາໄປໃຊ້ໃນການຈັດການຮຽນ - ການສອນວິຊາອັກສອນທໍາ ສອດຄ່ອງກັບທິດສະດີການຈັດການຮຽນຮູ້ແບບ CIRC ຂອງ Slavin (2013) ໄດ້ສະເໜີວ່າ ການຈັດການຮຽນຮູ້ແບບ CIRC ເປັນຮູບແບບການຮຽນ - ການສອນແບບຮ່ວມມືທີ່ໃຊ້ໃນການສອນອ່ານ ແລະ ຂຽນໂດຍກົງ. ຮູບແບບນີ້ປະກອບດ້ວຍກິດຈະກໍາຫຼັກ 3 ກິດຈະກໍາຄື ກິດຈະກໍາການອ່ານແບບຮຽນ; ການສອນການອ່ານເພື່ອຄວາມເຂົ້າໃຈ ແລະ ການບູລະນາການພາສາກັບການຮຽນໂດຍມີກິດຈະກໍາກ່ຽວກັບເລື່ອງທີ່ອ່ານເປັນກິດຈະກໍາທີ່ຄູກໍານົດໃຫ້ນັກຮຽນປະຕິບັດຫຼັງຈາກທີ່ຄູນໍາສະເໜີບົດຮຽນໄປແລ້ວໄດ້ແກ່ ກິດຈະກໍາເຝິກກ່ຽວກັບຄໍາສັບ, ຈັບກຸ່ມອ່ານ, ອ່ານເປັນຄູ່, ເຝິກອອກສຽງ, ຊອກຫາຄວາມໝາຍຂອງຄໍາ ແລະ ສະຫຼຸບໃຈຄວາມສໍາຄັນຂອງເລື່ອງ. ນອກຈາກນີ້ການຈັດກິດຈະກໍາການຮຽນຮູ້ ແມ່ນເປັນກຸ່ມນ້ອຍ ມີສະມາຊິກ 4 ຄົນ ເຊິ່ງຜູ້ຮຽນພາຍໃນກຸ່ມມີຄວາມສາມາດໃນການຮຽນແຕກຕ່າງກັນ, ແຕ່ລະ

ຄົນຕ້ອງມີສ່ວນຮ່ວມຢ່າງແທ້ຈິງໃນການຮຽນຮູ້, ມີການແລກປ່ຽນຄວາມຄິດເຫັນ, ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນສະມາຊິກແຕ່ລະຄົນພາຍໃນກຸ່ມມີຄວາມຮັບຜິດຊອບຕໍ່ການຮຽນຂອງຕົນເອງ, ຮັບຜິດຊອບຕໍ່ການຮຽນຮູ້ຂອງເພື່ອນ ເພາະຄວາມສຳເລັດຂອງບຸກຄົນ ຄື ຄວາມສຳເລັດຂອງກຸ່ມ. ດັ່ງນັ້ນ, ຈຶ່ງເຮັດໃຫ້ການຮຽນເປັນໄປຢ່າງມີປະສິດທິພາບ ສອດຄ່ອງກັບຜົນການຄົ້ນຄວ້າຂອງ ສຸວັນນາ ໂຄດຊົມພູ Suwanna (2014) ໂດຍສະຫຼຸບລວມແລ້ວເຫັນວ່າ ການນຳໃຊ້ວິທີສອນແບບ CIRC ເຂົ້າໃນການຈັດການຮຽນ-ການສອນສາ ມາດພັດທະນາການຮຽນຂອງຜູ້ຮຽນໃຫ້ດີຂຶ້ນຫຼາຍດ້ານ ເຊັ່ນ ການຮຽນຮູ້ຮ່ວມກັນ, ຄວາມສາມັກຄີຊ່ວຍເຫຼືອກັນ, ມີຄວາມກ້າຫານໃນການສະແດງຄວາມຄິດເຫັນ, ມີຄວາມຮັບຜິດຊອບສູງຕໍ່ວຽກທີ່ຖືກມອບໝາຍ ແລະ ອື່ນໆ.

ຄວາມເພິ່ງພໍໃຈຂອງນັກຮຽນທີ່ມີຕໍ່ການຈັດການຮຽນ - ການສອນວິຊາອັກສອນທຳ ເລື່ອງການການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳ ຂອງນັກສຶກສາປີ 2 ໂດຍນຳໃຊວິທີສອນແບບ CIRC ເປັນການຮຽນທີ່ນັກຮຽນທຸກຄົນໄດ້ມີສ່ວນຮ່ວມການປະຕິບັດກິດຈະກຳ, ເກີດຄວາມຮູ້ສຶກເຫັນຄຸນຄ່າຂອງຕົນເອງ, ນັກສຶກສາມີຄວາມສົນໃຈກະຕືລືລົ້ນ, ສະໜຸກສະໜານກັບການຮຽນຮູ້ບໍ່ໜ້າເບື່ອ ເຊິ່ງເຮັດໃຫ້ນັກຮຽນໄດ້ພັດທະນາທັກສະການອ່ານ, ການຂຽນ ແລະ ເຂົ້າໃຈເນື້ອໃນບົດຮຽນຫຼາຍຂຶ້ນ. ເປັນໄປຕາມທິດສະດີຄວາມເພິ່ງພໍໃຈຂອງ Maslow (1970) ໄດ້ສະຫຼຸບວ່າ ມະນຸດຕ້ອງການຄວາມເພິ່ງພໍໃຈຕາມລຳດັບຈາກຂັ້ນຕົ້ນໄປສູ່ຂັ້ນທີ່ສູງຂຶ້ນເລື້ອຍໆ, ຖ້າຄວາມຕ້ອງການຂັ້ນຕົ້ນໄດ້ຮັບການຕອບສະໜອງກໍຈະເຮັດໃຫ້ເກີດຄວາມຕ້ອງການໃນຂັ້ນຕໍ່ໄປ ແລະ ເປັນການສົ່ງເສີມແຮງຈູງໃຈຫຼາຍຂຶ້ນ. ສະນັ້ນ, ໃນການຈັດກິດຈະກຳການຮຽນ-ການສອນ ຄູຜູ້ສອນຕ້ອງເຂົ້າໃຈຄວາມຕ້ອງການຂອງຜູ້ຮຽນເພື່ອເຮັດໃຫ້ຜູ້ຮຽນເກີດການຮຽນຮູ້ຢ່າງເໝາະສົມ ແລະ ສອດຄ່ອງກັບຄຳຄິດເຫັນຂອງ Abbuhl & Co-authors (2018) ໃຫ້ຄວາມເຫັນວ່າ ຄວາມເພິ່ງພໍໃຈຄືຄວາມປະທັບໃຈ, ມີເຈດຕະຄະຕິທີ່ດີຕໍ່ບຸກຄົນ ຫຼື ການກະທຳຂອງບຸກຄົນໃນສິ່ງໃດສິ່ງໜຶ່ງອາດເກີດຈາກແຮງຈູງໃຈ ຫຼື ການກະຕຸ້ນຕໍ່ຄວາມຮູ້ສຶກອາລົມເຊິ່ງສະຕິປັນຍາເປັນພື້ນຖານໃນການຕັດສິນ. ດັ່ງນັ້ນ, ໃນຂະບວນການຈັດການຮຽນ - ການສອນຄູຈະຕ້ອງມີທັກສະການສອນທີ່ດີ, ສ້າງແຮງຈູງໃຈເພື່ອໃຫ້ນັກຮຽນເກີດຄວາມພໍໃຈ, ມີຄວາມກະຕືລືລົ້ນໃນການຮຽນ, ເຮັດໃຫ້ປະສົບຄວາມສຳເລັດທີ່ກຳນົດໄວ້.

## 5. ສະຫຼຸບ

ການສຶກສາຄົ້ນຄວ້າ ການນຳໃຊ້ວິທີສອນແບບ CIRC ເຂົ້າໃນການຈັດການຮຽນ - ການສອນ ວິຊາອັກສອນທຳ ເລື່ອງການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳ ຂອງນັກສຶກສາປີ 2 ພາກວິຊາຄູພາສາລາວ - ວັນນະຄະດີ, ຄະນະສຶກສາສາດ, ມີລະດັບການພັດທະນາດີຂຶ້ນຕາມລຳດັບໃນແຕ່ລະບົດສອນ ຫຼັງຈາກໄດ້ຮັບການພັດທະນາທັກສະການອ່ານ ແລະ ການຂຽນອັກສອນທຳ ໂດຍການນຳໃຊ້ວິທີສອນແບບ CIRC, ມີປະສິດທິພາບສູງກວ່າເກນທີ່ຕັ້ງໄວ້, ມີປະສິດທິຜົນ ຊ່ວຍໃຫ້ນັກຮຽນເກີດການຮຽນຮູ້ໄດ້ແທ້ຈິງ, ລະດັບຄວາມເພິ່ງພໍໃຈຕໍ່ການຈັດການຮຽນການສອນວິຊາອັກສອນທຳ ເລື່ອງການພັດທະນາທັກສະການພັດທະນາການອ່ານ ແລະ ການຂຽນອັກສອນທຳໂດຍການໃຊ້ວິທີສອນແບບ CIRC ທັງ 3 ດ້ານໂດຍລວມຈັດຢູ່ໃນລະດັບມີຄວາມເພິ່ງພໍໃຈຫຼາຍ

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ.

## 7. ເອກະສານອ້າງອີງ

Abbuhl, R., Gass, S., Mackey, A., Podesva, R. and Sharma, D. (2018), "Experimental research design", pp. 116-134.

Chaiwat, S. (2012), Innovative learning management that focuses on the student. 5th edition, Danex Inter Corporation, Bangkok.

Hidayat, T., Rahmat, A., S.Redjeki and Rahman, T. (2017), "E-Beam Capture Aid Drawing Based Modelling on Cell Biology", Journal of Physics: Conference Series. 895, pp 012121.

Luan, S. and Ankhana, S. (2000), Educational Research Techniques, 3rd, ed, Suwiriyasan, Bangkok.

Maslow, A. (1970), Motivation and Personality, Parper and Row, Newyork.

Education, M.O. (2013), 3 Characteristics and 5 Fundamentals of Education, The state enterprise of educational printing house, Vientiane Prefecture.

Udonphae, M. (2017), A Comparison of Reading Comprehension and Writing in English Mathayomsuksa 3 during the CIRC collaborative group learning activities and the KWLPlus learning activities, Thesis, M.Ed, Mahasarakham University, Mahasarakham.

Slavin, R.E. (2013), "Cooperative learning and achievement: Theory and research", pp 104 - 110.

Khotchomphu, S. (2014), Organizing learning activities using a cooperative learning model CIRC to develop reading comprehension in Thai subjects at grade 9Faculty of Education, Master of Education, Rajabhat Maha Sarakham University.

Thida, T. (2009), The Development of Learning Outcomes in Reading and Writing in English for Communication of Mathayomsuksa 3 Students who Managed Learning with the CIRC Technique, Silpakorn University, Nakhon Pathom.

Khaemmanee, T. (2007), Variety of alternative teaching styles, Athiphin Company Limited, Bangkok.

Laowreandee, W. (2005), Techniques and strategies to develop thinking skills Learner-centered learning management, Silpakorn University Printing House, Nakhon Pathom.


ຕາຕະລາງ 1 ຜົນການວິເຄາະປະສິດທິພາບຜົນການຮຽນ ($E_1$) ປະສິດທິພາບຜົນສຳເລັດທາງການຮຽນ $E_2$ ມີດັ່ງນີ້:

| ປະສິດທິພາບຂອງບົດສອນ | ຄະແນນລວມ | ຄະແນນສະເລ່ຍ | SD | ($E_1/E_2$) |
|---|---|---|---|---|
| ປະສິດທິພາບຂະບວນການຮຽນ $E_1$ | 1231 | 51.29 | 1.92 | 85.49/89.31 |
| ປະສິດທິພາບຜົນສຳເລັດທາງການຮຽນ $E_2$ | 643 | 26.79 | 3.94 | |

ຕາຕະລາງ 2 ສະແດງດັດສະນີປະສິດທິຜົນ (EI) ຂອງບົດສອນໂດຍນຳໃຊ້ວິທີສອນແບບ CIRC

| ນັກສຶກສາຄົນທີ | ທົດສອບກ່ອນຮຽນ | ທົດສອບຫຼັງຮຽນ |
|---|---|---|
| | 30 ຄະແນນ | 30 ຄະແນນ |
| 1 | 17 | 28 |
| 2 | 19 | 27 |
| 3 | 19 | 26 |
| 4 | 16 | 27 |
| 5 | 18 | 26 |
| 6 | 19 | 25 |
| 7 | 19 | 28 |
| 8 | 19 | 25 |
| 9 | 19 | 28 |

ຕາຕະລາງທີ 8 (ຕໍ່)

| ນັກສຶກສາຄົນທີ | ທົດສອບກ່ອນຮຽນ | ທົດສອບຫຼັງຮຽນ |
|---|---|---|

| | 30 ຄະແນນ | 30 ຄະແນນ |
|---|---|---|
| 10 | 17 | 29 |
| 11 | 18 | 30 |
| 12 | 19 | 25 |
| 13 | 19 | 28 |
| 14 | 19 | 25 |
| 15 | 19 | 25 |
| 16 | 18 | 29 |
| 17 | 17 | 26 |
| 18 | 18 | 25 |
| 19 | 18 | 30 |
| 20 | 17 | 25 |
| 21 | 18 | 26 |
| 22 | 18 | 26 |
| 23 | 17 | 29 |
| 24 | 17 | 25 |
| $\sum x$ | 434 | 643 |
| $\bar{X}$ | 18,08 | 26.79 |
| S.D | 0,67 | 1.96 |
| E2 | 60.28 | 89.31 |
| | | 0.7307 |
| | E.I | 73.07 |

ຕາຕະລາງ 3 ຜົນການວິເຄາະຄວາມເພິງພໍໃຈຂອງນັກຮຽນຕໍ່ການຈັດການຮຽນແບບ CIRC ຂັ້ນກະກຽມ

| ລດ | ເນື້ອໃນປະເມີນ | ຈຳນວນ | X | S.D | ແປຄວາມໝາຍ |
|---|---|---|---|---|---|
| | ນັກສຶກສາມີຄວາມເຂົ້າໃຈການແບ່ງກຸ່ມຊັດເຈນ | | 4.41 | 0.71 | ຫຼາຍ |
| | ນັກສຶກສາເຂົ້າໃຈຄູຊີ້ແຈງວິທີຮຽນ, ການເຮັດວຽກກຸ່ມລະອຽດ | | 4.45 | 0.58 | ຫຼາຍ |
| | ນັກສຶກສາເຂົ້າໃຈຄູແນະນຳວິທີໃຫ້ຄະແນນໃນການເຮັດວຽກກຸ່ມລະອຽດດີ | | 4.50 | 0.58 | ຫຼາຍ |
| | ລວມ | | 4.45 | 0.62 | ຫຼາຍ |

ຕາຕະລາງ 3 ຜົນການວິເຄາະຄວາມເພິງພໍໃຈຂອງນັກຮຽນຕໍ່ການຈັດການຮຽນແບບ CIRC ຂັ້ນສອນ

| ລດ | ເນື້ອໃນປະເມີນ | ຈຳນວນ | X | S.D | ແປຄວາມໝາຍ |
|---|---|---|---|---|---|
| | ການທວນຄືນບົດຮຽນເກົ່າເຮັດໃຫ້ນັກຮຽນຈື່ ແລະ ເຂົ້າໃຈບົດຮຽນເກົ່າດີຂຶ້ນ | 24 | 4.54 | 0.66 | ຫຼາຍທີ່ສຸດ |
| | ການນຳສະເໜີຂອງຄູເຮັດໃຫ້ນັກສຶກສາມີຄວາມສົນໃຈ, ມີຄວາມມ່ວນຊື່ນ | 24 | 4.42 | 0.78 | ຫຼາຍ |

| | | | | | |
|---|---|---|---|---|---|
| | ສື່ທີ່ນຳມາປະກອບກັບການສອນມີຄວາມໜ້າສົນໃຈ | 24 | 4.46 | 0.59 | ຫຼາຍ |
| | ນັກສຶກສາ ເຂົ້າໃຈ ແລະ ຈື່ບົດຮຽນໄດ້ດີເມື່ອຮຽນແບບນີ້ | 24 | 4.54 | 0.66 | ຫຼາຍທີ່ສຸດ |
| | ລວມ | | 4.49 | 0.67 | ຫຼາຍ |

ຕາຕະລາງ 5 ຜົນການວິເຄາະຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການຈັດການຮຽນຮູ້ແບບ CIRC ທັງ 3 ດ້ານ

| ລດ | ເນື້ອໃນປະເມີນ | ຈຳນວນ | X | S.D | ແປຄວາມໝາຍ |
|---|---|---|---|---|---|
| | ຂັ້ນກະກຽມ | 24 | 4.45 | 0.62 | ຫຼາຍ |
| | ຂັ້ນສອນ | 24 | 4.49 | 0.67 | ຫຼາຍ |
| | ການດຳເນີນກິດຈະກຳ | 24 | 4.48 | 0.64 | ຫຼາຍ |
| | ລວມ | | 4.47 | 0.64 | ຫຼາຍ |